ທ່ານສາມາດລົງ ທະບຽນເຂົ້າໂຮງ ຮຽນໄດ້ແລ້ວ!



ເຖິງແມ່ນວ່າທ່ານມີ:

- ບ່ອນຢູ່ອາໄສທີ່ບໍ່ແນ່ນອນ
- ທີ່ຢູ່ຊົ່ວຄາວ
- ບໍ່ມີທີ່ຢູ່ຖາວອນ

ການເຂົ້າຮຽນໃນໂຮງຮຽນຂອງທ່ານໄດ້ຮັບການຢືນ ຢັນໂດຍກົດໝາຍວັດຖະບານກາງ [McKinney-Vento] ແລະ ກົດໝາຍຂອງລັດຄາລິຟໍເນຍ, ຖ້າຫາກທ່ານອາໄສຢູ່:

- ໃນເຮືອນ ຫຼື ອາພາດເມັ້ນທີ່ມີຫຼາຍກວ່າໜຶ່ງຄອບຄົວ ເນື່ອງຈາກການສູນເສຍທີ່ຢູ່ອາໄສ ຫຼື ຄວາມຫຍຸ້ງຍາກທາງດ້ານເສດຖະກິດ
- ຢູ່ກັບໝູ່ເພື່ອນ ຫຼື ຄອບຄົວເນື່ອງຈາກວ່າທ່ານຫນີອອກມາ ຫຼື ເປັນເຍົາວະຊົນທີ່ເດີນທາງຄົນດຽວ
- ໃນເຮືອນທີ່ຕ່ຳກວ່າມາດຕະຖານ (ໂດຍປາສະຈາກໄຟຟ້າ, ນ້ຳ ຫຼື ເຄື່ອງທຳຄວາມຮ້ອນ)
- ຢູ່ໃນສູນພັກພິງ (ຄອບຄົວ, ຄວາມຮຸນແຮງໃນຄອບຄົວ ຫຼື ສູນພັກພິງເຍົາວະຊົນ ຫຼື ໂຄງການໃຊ້ຊີວິດໃນຊ່ວງປ່ຽນຜ່ານ)
- ຢູ່ໃນບ້ານພັກ, ໂຮງແຮມ ຫຼື ທີ່ພັກລາຄາລາຍອາທິດ
- ໃນຕຶກຮ້າງ, ໃນລົດ, ຢູ່ທີ່ແຄ້ມ ຫຼື ຢູ່ຕາມຖະໜົນຫົນທາງ

ທ່ານສາມາດລົງທະບຽນເຂົ້າໂຮງຮຽນໄດ້ທັນທີ, ເຖິງແມ່ນວ່າທ່ານຈະບໍ່ມີເອກະສານທີ່ຈຳເປັນສຳລັບການລົງທະບຽນຕາມປົກກະຕິເຊັ່ນ:

- ຫຼັກຖານຢັ້ງຢືນທີ່ຢູ່
- ບັນທຶກການສັກຢາກັນພະຍາດ ຫຼື ບັນທຶກສຸຂະພາບອື່ນໆທີ່ຈຳເປັນ
- ບັນທຶກໂຮງຮຽນ
- ເອກະສານການເປັນຜູ້ປົກຄອງທີ່ຖືກຕ້ອງຕາມກົດ ໝາຍ

ລູກຂອງທ່ານອາດຈະ:

- ເຂົ້າຮ່ວມໃນກິດຈະກຳ ແລະ ໂຄງການຂອງໂຮງຮຽນທຸກຢ່າງທີ່ລາວມີສິດ.
- ໄດ້ຮັບການຮັບສົ່ງຈາກໂຮງຮຽນຕົ້ນຕໍ, ຫາກທ່ານຕ້ອງການ.
- ສືບຕໍ່ໄປໂຮງຮຽນທີ່ລາວໄດ້ສະໝັກເຂົ້າຜ່ານມາ, ເຖິງ ແມ່ນວ່າທ່ານໄດ້ຍ້າຍໄປຫ່າງຈາກເຂດການສຶກສາ ຂອງ ໂຮງຮຽນນັ້ນ.
- ມີສິດຕໍ່ກັບໂຄງການໃຫ້ໂພຊະນາການຂອງໂຮງຮຽນ ໂດຍອັດຕະໂນມັດ.

ຄວາມຮັບຜິດຊອບຂອງທ່ານຕ້ອງ:

- ເຮັດໃຫ້ແນ່ໃຈວ່າລູກຂອງທ່ານເຂົ້າໂຮງຮຽນທັນເວລາ ແລະ ພ້ອມທີ່ຈະຮຽນຮູ້.
- ໃຫ້ໄດ້ຮັບແຈ້ງກ່ຽວກັບກົດລະບຽບ, ຂໍ້ກຳນົດ ແລະ ກິດຈະກຳຂອງໂຮງຮຽນຕະຫຼອດ.
- ຕິດຕໍ່ຜູ້ປະສານງານຊ່ວຍຄົນບໍ່ມີບ່ອນຢູ່ອາໄສຂອງ ທ່ານເພື່ອຂໍຄວາມຊ່ວຍເຫຼືອໃນການກຳຈັດສິ່ງທີ່ເປັນອຸປະສັກຕໍ່ການ ສຶກສາຂອງລູກທ່ານ.
- ເຂົ້າຮ່ວມການປະຊຸມພໍ່ແມ່/ຄູອາຈານ, ງານວັ້ງການກັບມາເຂົ້າໂຮງຮຽນ ແລະ ກິດຈະກຳອື່ນໆທີ່ກ່ຽວຂ້ອງ ກັບໂຮງຮຽນ.



ການດຳລົງຊີວິດພາຍໃຕ້ສະພາບການໃດໜຶ່ງທີ່ກ່າວມາຂ້າງເທິງບໍ່ໄດ້ເປັນສິ່ງທີ່ຜິດ ແລະ ໂຮງຮຽນ-ກຳພ້ອມທີ່ຈະໃຫ້ການຊ່ວຍເຫຼືອທ່ານ ແລະ ລູກຂອງທ່ານໃນການລົງທະບຽນເຂົ້າຮຽນ ພ້ອມທັງບໍລິ ການຕ່າງໆທີ່ເໝາະສົມ. ໂດຍຂໍ້ມູນນີ້ຈະບໍ່ຖືກ ເຜີຍແຜ່ອອກໄປນອກໜ່ວຍງານການສຶກສາ.

ສຳລັບຄຳຖາມກ່ຽວກັບການເຂົ້າຮຽນ ຫຼື ສຳລັບຄວາມຊ່ວຍເຫຼືອການເຂົ້າໂຮງຮຽນ, ຕິດຕໍ່ຫາ:



ຜູ້ປະສານງານຄົນບໍ່ມີບ່ອນຢູ່ອາໄສໃນ ເຂດໂຮງຮຽນທ້ອງຖິ່ນຂອງທ່ານ:

Add contact information

ຜູ້ປະສານງານຄົນບໍ່ມີບ່ອນຢູ່ອາໄສໃນ ເຂດຂອງທ່ານ:

Add contact information

ຜູ້ປະສານງານລັດກ່ຽວກັບຄົນບໍ່ມີ ບ່ອນຢູ່ອາໄສຂອງທ່ານ:

State Coordinator
California Department of Education
1430 N Street, Suite 6408
Sacramento, CA 95814
Phone: 1-866-856-8214
homelessed@cde.ca.gov